ຖແລງການ ປາຣີ ວັນທີ່ 28 ຕຸລາ 2015

**ສປປ ລາວ ບໍ່ ຖືກເລືອກ ເຂົ້າ ຢູ່ໃນ ກັມະທິການ ສິດທິ ມະນຸດ ຂອງ ສະຫະປະຊາຊາດ**

ສປປ ລາວ, ປະເທດ ຄອມມູນິສ, ພົບ ຄວາມ ຫລົ້ມເຫລວ ໃນ ການຫວັງ ຈະ ຄົ້ວເອົາ ທີ່ນັ່ງ ທີ່ ຄນະ ກັມມາທິການ ດ້ານ ສິດທິ ມະນຸດ ແຫ່ງ ອົງການ ສະຫະປະຊາຊາດ, ພາຍຫລັງ ການ ລົງສຽງ ຮັບເອົາ ພາຄີໃໝ່ 18 ປະເທດ ດວ້ຍກັນ ເມື່ອ ວັນພຸດ ທີ່ 28 ຕຸລາ 2015 ທີ່ ເມືອງ ນີວຢອກ.

ຄນະ ກັມມາທິການ ດ້ານ ສິດທິ ມະນຸດ ແມ່ນ ຫອ້ງການ ຂອງ ອົງການ ສະຫະປະຊາຊາດ ປະກອບ ດວ້ຍ 47 ປະເທດ. ບັນດາ ພາຄີໃໝ່ ຖືກເລືອກ ໂດຍຕຮົງ ຈາກ ການລົງ ຄະແນນ ອອກ ສຽງລັບ ຂອງ ກອງປະຊຸມ. ມີໝາຍ ກຳນົດ ເຂົ້າຮັບ ຕຳແໜ່ງ 3 ປີ ເລີ້ມແຕ່ ວັນທີ່ 1 ມົກະຣາ ຫາ ທ້າຍປີ 2018.

ສປປ ລາວ ເປັນ ນື່ງ ໃນ ບັນດາ ປະເທດ ເອເຊັຽ ທີ່ ເຂົ້າ ແຂ່ງຂັນ ເອົາ ທີ່ນັ່ງ ຊື່ງ ມີ 5 ບອ່ນ ສຳລັບ ເອເຊັຽ-ປາຊີຟິກ. ປະເທດ ທີ ຖືກ ຮັບ ເລືອກ ເປັນ ພາຄີ ຄື ປະເທດ ມົງໂກລີ, ກູ່ມພັນທະມິດ ອາຣັບ, ກີກກີສຖານ, ເກົາຫລີໃຕ້ ແລະ ຟີລີປີນ ຊື່ງ ນຳໜ້າ ສປປ ລາວ ດວ້ຍ ຄະແນນ 113 ສຽງ ຕໍ່ 105 ສຽງ. ສວ່ນ ປະເທດ ມົງໂກລີ ໃດ້ ຮັບສຽງ ຫລາຍກ່ວ່ ພາຄີອື່ນ ຂອງ ພາກເອເຊັຽ- ປາຊີຟິກ ດວ້ຍ ຄະແນນ 172 ສຽງ ຕິດຕາມ ດວ້ຍ ກູ່ມ ພັນທະມິດ ອາຣັບ ຊື່ງ ໃດ້ ຮັບ 159 ສຽງ.

ຂະບວນການລາວ ເພື່ອ ສິດທິ ມະນຸດ ຖືວ່າ ຈະ ໜ້າເສັຽດາຍ ທີ່ສູດ ຖ້າວ່າ ສປປ ລາວ, ຊື່ງມີ ຣັຖະບານ ປາບປາມ ອິດສະຣະພາບ ຂອງ ປະຊາຊົນ ແລະ ລະເມີດ ສິດທິ ມະນຸດ ຢ່າງແຮງ, ຫາກ ເຂົ້າເປັນ ພາຄີ ສັງກັດ ໃນ ກັມມາທິການ ສດທິ ມະນຸດ ຂອງ ສເຫະປະຊາຊາດ ຊື່ງ ຫອງການ ດັ່ງກ່າວ ມີ ໜ້າທີ່ ເພີ້ມທະວີ ການ ສົ່ງເສີມ ແລະ ປົກປອ້ງ ສິດທິ ມະນດ.